# ສຶກສາຄວາມຕ້ອງການໃນການພັດທະນາຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດ ຊັ້ນປະຖົມໃນແຂວງຈຳປາສັກ

*ນາງ ຂຽວສົມພອນ ສີຫາວົງ**

*ພະແນກຄົ້ນຄວ້າວິທະຍາສາດ ແລະ ພັດທະນາວິຊາຊີບຄູ, ວິທະຍາໄລຄູປາກເຊ*

## ບົດຄັດຫຍໍ້

ການວິໄຈຄັ້ງນີ້ມີຈຸດປະສົງ ເພື່ອສຳຫຼວດ ແລະ ເກັບກຳຂໍ້ມູນຄວາມຕ້ອງການໃນການພັດທະນາຂີດຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ. ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາແມ່ນຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ຈຳນວນ 35 ຄົນ; ຍິງ 15 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນໃນຄັ້ງນີ້ແມ່ນນຳໃຊ້ແບບສອບຖາມທາງອອນລາຍ ເພື່ອປະເມີນຄວາມຕ້ອງການຂອງຜູ້ເຮັດວຽກສຶກສານິເທດໃນ 3 ດ້ານຄື: ດ້ານຄວາມຮູ້, ດ້ານທັກສະ ແລະ ທັດສະນະຄະຕິ ຈຳນວນ 13 ຂໍ້ 69 ລາຍການ. ເຊິ່ງຈະເປັນແບບສອບຖາມໃຫ້ຄະແນນເປັນມາດຕາສ່ວນ 5 ລະດັບຄື: ມີຄວາມສາມາດໃນລະດັບດີຫຼາຍຄະແນນເທົ່າກັບ 5, ມີຄວາມສາມາດໃນລະດັບດີຄະແນນເທົ່າກັບ 4, ມີຄວາມສາມາດໃນລະດັບປານກາງຄະແນນເທົ່າ 3, ມີຄວາມສາມາດໃນລະດັບໜ້ອຍຄະແນນເທົ່າກັບ 2, ມີຄວາມສາມາດໃນລະດັບໜ້ອຍທີ່ສຸດຄະແນນເທົ່າກັບ 1. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຂອງຄ່າຄະແນນໃນແຕ່ລະຂໍ້ແລ້ວປຽບທຽບຜົນຂອງຄະແນນຕາມລະດັບມາດຕະຖານທີ່ຕັ້ງໄວ້. ຜົນການວິໄຈພົບວ່າ: ຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາພາຍໃນແຂວງຈຳປາສັກ ມີຂີດຄວາມສາມາດຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍໂດຍລວມເທົ່າກັບ $\bar{X} = 4.02$ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ $S.D = 0.03$, ຖ້າທຽບໃນ 3 ດ້ານ. ໂດຍສະເພາະທາງດ້ານທັດສະນະຄະຕິແມ່ນມີຄ່າສະເລ່ຍຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ $\bar{X} = 4.38$ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ $S.D = 0.02$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມສາມາດຢູ່ໃນລະດັບຫຼາຍ. ສ່ວນດ້ານທີ່ມີຄວາມສາມາດເຊິ່ງມີຄ່າສະເລ່ຍໜ້ອຍ ແມ່ນທາງດ້ານຄວາມຮູ້ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 3.78$ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ $S.D = 0.06$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມສາມາດຢູ່ໃນລະດັບຫຼາຍ.

***ຄຳສັບສຳຄັນ:*** *ຄວາມຮູ້, ທັກສະ, ທັດສະນະຄະຕິ, ຜູ້ເຮັດວຽກສຶກສານິເທດ*

**ຕິດຕໍ່ພົວພັນ: ນາງ ຂຽວສົມພອນ ສີຫາວົງ; ໂທ: 020 98909855; ອີເມວ: ksp.sihavong@gmail.com*

# A Study of the Capacity Building Needs of Pedagogy Advisors at Primary Level in Champasak Province

*Khieosomphone Syhavong*

*Scientific Research and Teacher Professional Development, Pakse Teacher Training College*

## Abstract

This research aims to identify the training needs of Primary Education Pedagogy Advisors in Champasak Province, focusing on their knowledge, skills, and attitudes. The study involved 35 Pedagogy Advisors, including 15 women, from Champasak Province. Data was collected using an online questionnaire to assess the advisors' needs in three areas: knowledge, skills, and attitudes, covering 13 points with 69 items. The questionnaire used a 5-point scale. The statistical methods used in this research were the mean and standard deviation. Data analysis determined the mean and standard deviation in relation to the provided criteria scale. The research found that, overall, the abilities of Primary Education Pedagogy Advisors in Champasak Province are high, with an average score of 4.02 (S.D. = 0.03) based on the set criteria. Among the three aspects, the highest-rated was attitude, with an average score of 4.38 (S.D. = 0.02), which is considered high according to the set criteria. The lowest-rated aspect was knowledge, with an average score of 3.78 (S.D. = 0.06), though still relatively high compared to the set criteria.

***Key words: Keywords:*** *Knowledge, Skills, Attitude, pedagogy advisors*

**Correspondence: khieosomphone Syhavong*; *Tel: 020 98909855; Email: ksp.sihavong@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ແຜນພັດທະນາການສຶກສາ ແລະ ກິລາ 5 ປີ (2021 – 2025) ໄດ້ກຳນົດຈຸດປະສົງສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອປັບປຸງຄຸນນະພາບ , ປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຮັບຜິດຊອບຂອງເຂົາເຈົ້າ ໂດຍຜ່ານການສ້າງຄວາມສອດຄ່ອງຄືນໃໝ່ໃນໜ້າທີ່, ພາລະບົດບາດ ແລະ ຄວາມຮັບຜິດຊອບ. ເລັງໃສ່ການປັບປຸງການຮຽນໃຫ້ດີຂຶ້ນ ເພື່ອໃຫ້ເດັກໄດ້ຮັບການເບິ່ງແຍງລ້ຽງດູ, ມີສຸຂະພາບ ແລະ ໂພຊະນາການທີ່ດີ ແລະ ໄດ້ຮັບການພັດທະນໄປຕາມເກນອາຍຸພ້ອມທັງມີທັກສະພາສາລາວ, ການປະພຶດ, ຄຸນສົມບັດ ແລະ ຄວາມພ້ອມດ້ານອື່ນໆເພື່ອເຂົ້າຮຽນ ປ 1. (ກະຊວງສຶກສາທິການ ແລະ ກິລາ, 2020).

ຫຼັກສູດ ຊັ້ນປະຖົມສຶກສາ ໄດ້ຮັບການປັບປຸງສຳເລັດແລ້ວ, ໂດຍສຸມໃສ່ການສະໜັບສະໜຸນດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ . ວຽກຈຸດສຸມນີ້ແມ່ນສອດຄ່ອງ ບູລິມະສິດຕົ້ນຕໍ ດ້ານຈຸດປະສົງນະໂຍບາຍແຜນຍຸດທະສາດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຂອງລັດທະບານລາວ ປີ 2021-2025 ສຸມໃສ່ ບູລິມະສິດຂອງຂະແໜງການສຶກສາເພື່ອ ປັບປຸງດ້ານເນື້ອໃນ ແລະ ທັກສະການສອນຂອງຄູປະຖົມເພື່ອປັບປຸງຜົນການຮຽນຂອງນັກຮຽນ. ເຖິງວ່າຫຼັກສູກຊັ້ນປະຖົມຈະມີການປັບປຸງ ສຳເລັດແລ້ວກໍຕາມ ແຕ່ກໍຍັງມີສິ່ງທ້າທາຍຫຼາຍຢ່າງ ໃນການນຳໃຊ້ມາດຕະຖານການສອນ ແລະ ຄວາມຈຳເປັນໃນການປັບປຸງລະບົບວິຊາຊີບຄູແບບຕໍ່ເນື່ອງ ເພື່ອນຳໄປສູ່ການປັບປຸງຜົນສຳເລັດດ້ານການຮຽນຂອງນັກຮຽນ (ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ, 2023).

ການສຶກສາຊັ້ນປະຖົມ ແມ່ນການສຶກສາຂັ້ນພື້ນຖານ ທີ່ມີຄວາມສຳຄັນ ຂະແໜງການສຶກສາ ແລະ ກິລາ ໄດ້ກຳນົດບູລິມະສິດຈຳນວນໜຶ່ງ ສຸມໃສ່ປັບປຸງ ການຮຽນການສອນ ກຳນົດທັກສະຄວາມສາມາດຂອງພະນັກງານພາຍໃນຂະແໜງການສຶກສາ ແລະ ກິລາ ເພື່ອປັບປຸງຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ ໂດຍສະເພາະເມືອງທີ່ດ້ອຍໂອກາດທາງການສຶກສາ . ມາດຕະຖານກອ່ານໃນຂັ້ນ ປ.3 ນັກຮຽນສາສມາດອ່ານເປັນຄຳ,ສະກົດຄຳ,ອ່ານອອກສຽງຢ່າງຄ່ອງແຄ້ວ,ບອກຄວາມໝາຍຂອງບົດທີ່ອ່ານ ,ຈັບໃຈຄວາມໄດ້ ແລະ ມີມາລະຍາດໃນການອ່ານ. ນອກຈາກນັ້ນ, ນັກຮຽນຍັງຕ້ອງສາມາດຂຽນງາມ, ຂຽນທວາຍໄດ້ໄວ ແລະ ຖືກຕ້ອງ,ແຕ່ງປະໂຫຍກແຕ່ງປະໂຫຍກຂໍ້ຄວາມໄດ້ຕາມກຳນົດ,ແຕ່ງເລື່ອງສັ້ນໆຕາມຮູບພາບ,ມີມາລະຍາດໃນການຂຽນຖືກຕ້ອງຕາມຫຼັກໄວຍາກອນ. ອີງໃສ່ມາດຕະຖານດັ່ງກ່າວ ເຫັນວ່າ : ບັນຫາທີ່ເປັນສິ່ງທ້າທາຍໃນການສອນສຶກສາຊັ້ນປະຖົມ ແມ່ນ ນັກຮຽນຍັງບໍ່ສາມາດອ່ານອອກ ແລະ ຂຽນເປັນ ໂດຍສະເພາະ ຂັ້ນ ປ.3 (ກະຊວງສຶກສາທິການ ແລະ ກິລາ, 2020).

ຜົນການປະເມີນ ການຮຽນພາສາລາວ ຂອງ ASLO ໄດ້ສະແດງໃຫ້ເຫັນວ່າ ນັກຮຽນຊັ້ນປະຖົມມີລະດັບຄວາມຮູ້ດ້ານພາສາລາວຍັງຕໍ່າ, ນັກຮຽນສ່ວນຫຼາຍບໍ່ສາມາດອ່ານຂໍ້ຄວາມງ່າຍໆ ແລະ ຈັບໃຈຄວາມໃນສິ່ງທີ່ໄດ້ອ່ານນັ້ນໄດ້ ຈົນກວ່າຮອດຊ່ວງທ້າຍ ຂອງຊັ້ນປະຖົມສຶກສາ. ນັກຮຽນ ປ.3 ມີ 32% ທີ່ອ່ານບໍ່ໄດ້, 25% ອ່ານໄດ້ແຕ່ບໍ່ເຂົ້າໃຈ, 34% ອ່ານໄດ້ເຂົ້າໃຈບາງຄໍາ, ມີພຽງ 8% ທີ່ອ່ານໄດ້ດີ ແລະ ເຂົ້າໃຈ (ກະຊວງສຶກສາທິການ ແລະ ກິລາ, 2015).

ດໍາລັດຂອງລັດຖະມົນຕີ ເລກທີ 3342 ວ່າດ້ວຍ ການພັດທະນາວິຊາຊີບແບບຕໍ່ເນື່ອງ ໄດ້ກໍານົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບສໍາລັບທຸກໆຫ້ອງການ ແລະ ບຸກຄະລາກອນທຸກຄົນ ທີ່ມີສ່ວນຮ່ວມໃນການສະໜັບສະ ໜູນການຝຶກອົບຮົມຄູ ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງ. ພາລະບົດບາດຂອງຄູນິເທດໄດ້ມີການປ່ຽນ ແປງ, ແລະ ມັນໄດ້ຮຽກຮ້ອງໃຫ້ຄູນິເທດຕ້ອງໄດ້ພັດທະນາຄວາມຮູ້ ແລະ ທັກສະໃໝ່ໆທີ່ກ່ຽວຂ້ອງກັບໜ້າທີ່ ອັນໃໝ່ຂອງພວກເຂົາ ແລະ ທັງຕ້ອງໄດ້ເສີມສ້າງທັກສະຄວາມສາມາດທີ່ມີຢູ່ໃຫ້ເຂັ້ມແຂງຍິ່ງຂຶ້ນ (ກະຊວງສຶກສາທິການ ແລະ ກິລາ, 2023).

ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແມ່ນຂະບວນການຈັດຕັ້ງປະຕິບັດ ວຽກງານການພັດທະນາວິຊາຊີບ ຊຶ່ງລວມມີການບໍາລຸງຄູປະຈໍາການ, ການສຶກສານິເທດ ແລະ ເຄືອຂ່າຍການພັດທະນາວິຊາຊີບຄູ; ໂດຍເລີ່ມ ແຕ່ການບັນຈຸເຂົ້າເປັນຄູໃຫມ່ ຫຼື ເປັນຜູ້ເຮັດວຽກງານສຶກສານິເທດໃຫມ່ ໄປຕະຫຼອດຊົ່ວໄລຍະຂອງ ການປະຕິບັດຫນ້າທີ່ເປັນຄູ ແລະ ການດໍາເນີນວຽກງານການສຶກສານິເທດ; ຂະບວນການດັ່ງກ່າວຕ້ອງມີການດໍາເນີນການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ມີການຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ເປັນແຕ່ລະໄລຍະ.

ການສຶກສານິເທດ ແມ່ນຂະບວນການແນະນໍາ, ຊຸກຍູ້, ຊ່ວຍເຫຼືອ, ສົ່ງເສີມ, ຕິດຕາມ ແລະ ສະຫນັບສະຫນູນ ທາງດ້ານວິຊາການໃນການສິດສອນໃຫ້ແກ່ ຄູ ແລະ ຜູ້ອໍານວຍການ ເພື່ອໃຫ້ການຈັດການຮຽນການສອນ ໄປຕາມຫຼັກວິຊາການໃນຫຼັກສູດແຫ່ງຊາດ.

ດໍາລັດວ່າດ້ວຍການສຶກສາຊັ້ນສູງໄດ້ກໍານົດໃຫ້ສະຖາບັນການສຶກສາຊັ້ນສູງມີໜ້າທີ່ໃນການຈັດຕັ້ງການຮຽນການສອນ ແລະ ການຝຶກອົບຮົມ, ຈັດຕັ້ງການຄົ້ນຄວ້າ ແລະ ເຜີຍແຜ່ຜົນສໍາເລັດຂອງການຄົ້ນຄວ້າວິທະຍາສາດ, ບໍລິການວິຊາການໃຫ້ແກ່ສັງຄົມ, ປົກປັກຮັກສາ ແລະ ສົ່ງເສີມສິລະປະວັດທະນະທໍາຂອງຊາດ ສົມທົບການຮັບເອົາວັດທະນະທໍາອັນດີງາມ ແລະ ກ້າວໜ້າຂອງໂລກ, ຮ່ວມມືກັບສະຖາບັນການສຶກສາ ແລະ ອົງການຈັດຕັ້ງທັງພາກພື້ນ ແລະ ສາກົນ (ວິທະຍາໄລຄູປາກເຊ, 2020)

ຈາກແຜນພັດທະນາ ແລະ ດໍາລັດຕ່າງໆທີ່ກ່າວໄວ້ໃນຂ້າງເທິງ ຂ້າພະເຈົ້າໃນນາມຄູສອນໃນສະຖາບັນສ້າງຄູ ແລະ ເປັນຜູ້ຮັບຜິດຊອບຕິດຕາມ, ຊຸກຍູ້ ແລະ ສະໜັບສະໜູນຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈໍາປາສັກ ແລະ ອັດຕະປື ໃນນາມວິທະຍາໄລຄູປາກເຊ ຈຶ່ງມີຄວາມຕ້ອງການເພື່ອສຶກສາເບິ່ງຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈໍາປາສັກ ເພື່ອຈະເປັນແນວທາງໃນການວາງແຜນໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນວຽກງານດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### *1.2. ຄໍາຖາມຂອງການຄົ້ນຄ້ວາ*

1. ຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາຂອງແຂວງຈໍາປາສັກຈະມີຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິຢູ່ໃນລະດັບໃດ?

2. ແນວທາງໃນການພັດທະນາຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດຈະຢູ່ໃນດ້ານໃດແດ່?

### *1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອສຶກສາຄວາມຕ້ອງການໃນການພັດທະນາຂີດຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈໍາປາສັກ

2. ເພື່ອເປັນແນວທາງໃນການຊຸກຍູ້ຊ່ວຍເຫຼືອ ແລະ ສະໜັບສະໜູນໃຫ້ແກ່ຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈໍາປາສັກ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການສຶກສາຄົ້ນຄວ້າເລື່ອງ: ສຶກສາຄວາມຕ້ອງການໃນການພັດທະນາຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈໍາປາສັກ. ຜູ້ວິໄຈໄດ້ສຶກສາ, ລວບລວມບົດວິໄຈທີ່ກ່ຽວຂ້ອງມານໍາສະເໜີດັ່ງລຸ່ມນີ້:

ກະຊວງສຶກສາທິການ ແລະ ກິລາ ,ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາໄດ້ສຶກສາກ່ຽວກັບ ການປະເມີນຜົນສໍາເລັດດ້ານການຮຽນ ຂອງນັກຮຽນຊັ້ນປະຖົມ ປີທີ 3 ໃນສ ປ ປ ລາວ .ພົບວ່າ: ປັດໄຈທີ່ມີຄວາມສໍາພັນກັບຜົນສໍາເລັດດ້ານການຮຽນຂອງນັກຮຽນມີຫຼາຍປັດໃຈປະກອບມີ: 1) ປັດໄຈນໍາເຂົ້າດ້ານເສດຖະກິດຄອບຄົວ ແລະ ການສະໜັບສະໜູນອື່ນໆ ຈາກພາຍນອກໂຮງຮຽນ. 2) ສະພາບເງື່ອນໄຂຂອງຫ້ອງຮຽນ ແລະ ຂະບວນການໃນການຈັດການຮຽນການສອນ. 3) ປັດໄຈນໍາເຂົ້າຕ່າງໆ ຂອງໂຮງຮຽນ. ສຸພາວະດີ ປົກຄອງ, ສຸວັດຈຸລະສຸວັນ (2018) ໄດ້ສຶກສາກ່ຽວກັບ ການພັດທະນາຄູໂດຍໃຊ້ແນວຄິດຊຸມຊົນການຮຽນຮູ້ທາງວິຊາຊີບເພື່ອການອ່ານອອກຮຽນໄດ້ຂອງນັກຮຽນປະຖົມສຶກ. ຜົນການວິໄຈພົບວ່າ: 1) ຄູມີຄວາມຮູ້ ແລະ ຄວາມເຂົ້າໃຈໃນການຄຸ້ມຄອງການຮຽນການສອນ ຫຼາຍກວ່າກ່ອນການຝຶກອົບຮົມ, ມີຄວາມໝາຍທາງສະຖິຕິຢູ່ລະດັບ .05 2) ຄູມີຄວາມສາມາດໃນການຈັດຕັ້ງການຮຽນ . ໂດຍລວມແມ່ນຢູ່ໃນລະດັບສູງສຸດ 3) ຄວາມພໍໃຈຂອງການນໍາໃຊ້ລະບົບການພັດທະນາຄູໂດຍນໍາໃຊ້ແນວຄວາມຄິດຂອງຊຸມຊົນການຮຽນຮູ້

ວິຊາຊີບ. ສຳລັບຄວາມຊັດເຈນ ຄວາມສາມາດໃນການຂຽນຂອງນັກຮຽນຊັ້ນປະຖົມ ພົບວ່າມີລະດັບຄວາມພໍໃຈສູງສຸດ ແລະ 4) ນັກຮຽນມີຄວາມສາມາດ ໃນດ້ານການຮູ້ໜັງສືຫຼັງຮຽນແມ່ນສູງກວ່າກ່ອນຮຽນ. ມີຄວາມສຳຄັນທາງສະຖິຕິໃນລະດັບ .05. ປໍລະເມກ ກົ່ນຫອມ (2021). ໄດ້ສຶກສາກ່ຽວກັບ ການພັດທະນາຊຸດກິດຈະກຳການຮຽນການສອນບູລະນາການເພື່ອສົ່ງເສີມທັກສະການອ່ານຂຽນໄດ້ຂອງນັກຮຽນລະດັບປະຖົມສຶກສາປີທີ 1-4. ຜົນການວິໄຈພົບວ່າ:1)ຜົນການອ່ານອອກຂຽນໄດ້ຂອງນັກຮຽນພາບລວມຍັງຕໍ່າກວ່າເກນມີສາເຫດມາຈາກ ໂຮງຮຽນມີທີ່ຕັ້ງຢູ່ເຂດພື້ນທີ່ຫ່າງໄກ, ຜູ້ບໍລິຫານ ແລະຄູ ຕ້ອງການພັດທະນາຜົນສຳເລັດທາງການຮຽນຂອງນັກຮຽນ 2) ການຈັດກິດຈະກຳແບບບູລະນາການເໝາະໂຮງຮຽນ, 3)ຜົນການທົດລອງສູງກວ່າເກນ ທັງໝົດ 4 ຊຸດ ມີປະສິດຕິພາບສູງກວ່າມາດຖານ 80/80 4) ການປະເມີນພົບວ່າ ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນຊັ້ນປະຖົມປີທີ 1-4 ຂອງການສຶກສາແມ່ນປະເມີນຈາກທັກສະການອ່ານ ແລະທັກສະການຂຽນ ຫຼັງຈາກການເຂົ້າຮ່ວມໃນການຄົ້ນຄວ້າແມ່ນສູງຂຶ້ນ ກ່ອນທີ່ຈະເຂົ້າຮ່ວມກັບຄວາມສຳຄັນທາງສະຖິຕິໃນລະດັບ 0.05, ນັກຮຽນໃນທຸກລະດັບ ມີພຶດຕິກຳທີ່ສະແດງໃຫ້ເຫັນຄວາມສຸກໃນ ສຶກສາຫຼັງຈາກເຂົ້າຮ່ວມກິດຈະກຳໃນລະດັບສູງ ($\bar{x}$ = 3.93).

## 3. ວິທີດຳເນີນການຄົ້ນຄວ້າ

ການສຶກສາຄົ້ນຄວ້າຄັ້ງນີ້ແມ່ນເປັນການຄົ້ນຄວ້າແບບສຶກສາ ແລະ ສຳຫຼວດຂໍ້ມູນກ່ຽວກັບຄວາມຕ້ອງການໃນການພັດທະນາການສ້າງຂີດຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ໃນການດຳເນີນການວິໄຈໃນຄັ້ງນີ້ ແມ່ນຜູ້ເຮັດວຽກສຶກສານິເທດຊັ້ນປະຖົມຂອງ ແຂວງ ຈຳປາສັກ ຈຳນວນ 35 ຄົນ; ຍິງ 15 ຄົນ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນໃນຄັ້ງນີ້ ແມ່ນນຳໃຊ້ແບບສອບຖາມທາງອອນລາຍ ເພື່ອປະເມີນຄວາມຕ້ອງການຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງ ຈຳປາສັກ ໃນ 3 ດ້ານຄື: ດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ເຊິ່ງຈະເປັນແບບສອບຖາມໃຫ້ຄະແນນເປັນມາດຕາສ່ວນ 5 ລະດັບ ດັ່ງລຸ່ມນີ້:

| | |
|---|---|
| ຄວາມສາມາດໃນລະດັບດີຫຼາຍ | = ຄະແນນ 5 |
| ຄວາມສາມາດໃນລະດັບດີ | = ຄະແນນ 4 |
| ຄວາມສາມາດໃນລະດັບປານກາງ | = ຄະແນນ 3 |
| ຄວາມສາມາດໃນລະດັບໜ້ອຍ | = ຄະແນນ 2 |
| ຄວາມສາມາດໃນລະດັບໜ້ອຍທີ່ສຸດ | = ຄະແນນ 1 |

*3.3 ວິທີເກັບກຳຂໍ້ມູນ*

ສຶກສາຄວາມຕ້ອງການໃນການພັດທະນາຂີດຄວາມສາມາດຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກໄດ້ດຳເນີນການເກັບກຳຂໍ້ມູນດັ່ງນີ້:

1). ນຳເອົາແບບສອບຖາມທາງອອນລາຍ ສົ່ງໄປໃນກຸ່ມວອດແອັບຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາເພື່ອສຳຫຼວດ ແລະ ເກັບກຳຂໍ້ມູນຄວາມຕ້ອງການໃນການພັດທະນາຂີດຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ.

2). ຜູ້ເຮັດວຽກສຶກສານິເທດເຂົ້າໄປຕອບແບບສອບຖາມທາງອອນລາຍຕາມລິ້ງຜູ້ເຮັດການວິໄຈສົ່ງລົງໃນກຸ່ມ.

3). ນຳເອົາຂໍ້ມູນທີ່ໄດ້ ມາສັງລວມ ເພື່ອນຳເອົາຂໍ້ມູນໄປດຳເນີນເຮັດການວິເຄາະໃນຂັ້ນຕໍ່ໄປ.

*3.4 ການວິເຄາະຂໍ້ມູນ*

ຫຼັງຈາກເກັບກຳຂໍ້ມູນ ແລະ ສັງລວມສຳເລັດແລ້ວ ຜູ້ເຮັດວິໄຈຈະໄດ້ນຳເອົາຂໍ້ມູນມາຈັດເຂົ້າໃນຖານຂໍ້ມູນ ແລະ ສືບຕໍ່ດຳເນີນການວິເຄາະຂໍ້ມູນ ເຊິ່ງການວິເຄາະຂໍ້ມູນຄັ້ງນີ້ຜູ້ວິໄຈໄດ້ວິເຄາະຂໍ້ມູນແບບປະລິມານໂດຍການນຳໃຊ້ສູດຄິດໄລ່ທາງສະຖິຕິດັ່ງນີ້:

1) ຊອກຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຂອງຄ່າຄະແນນໃນແຕ່ລະຂໍ້.

2) ປຽບທຽບຜົນຂອງຄ່າຄະແນນຕາມລະດັບມາດຕະຖານທີ່ຕັ້ງໄວ້

3) ຜູ້ຄົ້ນຄວ້າວິໄຈໄດ້ດຳເນີນການວິເຄາະຂໍ້ມູນຕາມລຳດັບຂັ້ນຕອນດັ່ງນີ້:

ຕອນທີ 1: ວິເຄາະຂໍ້ມູນທົ່ວໄປກ່ຽວກັບຜູ້ຕອບແບບສອບຖາມໂດຍໃຊ້ສູດຄິດໄລ່ຄ່າສ່ວນຮ້ອຍ

ຕອນທີ 2: ວິເຄາະຂໍ້ມູນອານຮູ້ດ້ານທັກສະຕ່າງໆຂອງຜູ້ເຮັດວຽກສຶກສານິເທດໃນ 3 ດ້ານ: ດ້ານຄວາມຮູ້, ດ້ານທັກສະ ແລະ ດ້ານທັດສະນະຄະຕິ. ໂດຍໃຊ້ສູດຄິດໄລ່ຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ແລ້ວມາສົມທຽບລະດັບຄວາມສາມາດຕາມຄະແນນຄ່າສະເລ່ຍທີ່ກຳນົດໄວ້ດັ່ງນີ້:

| ຄ່າສະເລ່ຍ | ການແປຄວາມໝາຍ |
|---|---|
| 4.51 – 5.00 | ມີຄວາມສາມາດໃນລະດັບຫຼາຍທີ່ສຸດ |
| 3.51 – 4.50 | ມີຄວາມສາມາດໃນລະດັບຫຼາຍ |
| 2.51 – 3.50 | ມີຄວາມສາມາດໃນລະດັບປານກາງ |
| 1.51 – 2.50 | ມີຄວາມສາມາດໃນລະດັບໜ້ອຍ |
| 1.00 – 1.50 | ມີຄວາມສາມາດໃນລະດັບໜ້ອຍທີ່ສຸດ |

## 4. ຜົນການຄົ້ນຄວ້າ

ຈາກການສຶກສາ ແລະ ສຳຫຼວດວິໄຈກ່ຽວກັບຄວາມຕ້ອງການໃນການສ້າງຂີດຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິໃຫ້ແກ່ຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ສາມາດນຳເອົາຜົນຂອງການຄົ້ນຄວ້າມານຳສະເໜີດັ່ງລຸ່ມນີ້:

### *4. 1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*




ຮູບທີ 1. ຂໍ້ມູນດ້ານເພດຂອງກຸ່ມຕົວຢ່າງ

ຈາກກຣາບຟົກຜົນການວິເຄາະຂໍ້ມູນກ່ຽວກັບເພດຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ມີຈຳນວນເພດຊາຍ 20 ຄົນ ເທົ່າກັບ 57.10%. ຈຳນວນເພດຍິງ 15 ຄົນ ເທົ່າກັບ 42.90%.




ຮູບທີ 2. ຂໍ້ມູນກ່ຽວກັບອາຍຸ

ຈາກກາລາຟົກຜົນການວິເຄາະຂໍ້ມູນກ່ຽວກັບອາຍຸຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ຜູ້ມີອາຍຸ 25 – 30 ປີ. ມີຈຳນວນ 1 ຄົນ ເທົ່າກັບ 2.90%, ຜູ້ມີອາຍຸ 30 – 35 ປີ. ມີຈຳນວນ 4 ຄົນ ເທົ່າກັບ 11.40%, ຜູ້ມີອາຍຸ 35 – 40 ປີ. ມີຈຳນວນ 18 ຄົນ ເທົ່າກັບ 51.40%, ຜູ້ມີອາຍຸ 40 – 45 ປີ. ມີຈຳນວນ 9 ຄົນ ເທົ່າກັບ 25.70%, ຜູ້ມີອາຍຸ 45 ປີຂຶ້ນໄປ. ມີຈຳນວນ 3 ຄົນ ເທົ່າກັບ 8.60%.




ຮູບທີ 3. ຂໍ້ມູນດ້ານວິຊາສະເພາະ

ຈາກກາລາຟົກຜົນການວິເຄາະຂໍ້ມູນກ່ຽວກັບວຸດທິການສຶກສາວິຊາສະເພາະຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ຊັ້ນກາງ ມີຈຳນວນ 1 ຄົນ ເທົ່າກັບ 2.90%, ຊັ້ນສູງ ມີຈຳນວນ 17 ຄົນ ເທົ່າກັບ 48.60%, ປະລິນຍາຕີ ມີຈຳນວນ 15 ຄົນ ເທົ່າກັບ 42.90%, ເໜືອປະລິນຍາຕີ ມີຈຳນວນ 1 ຄົນ ເທົ່າກັບ 2.90%, ປະລິນຍາເອກ ມີຈຳນວນ 1 ຄົນ ເທົ່າກັບ 2.90%.




ຮູບທີ 4. ຂໍ້ມູນດ້ານປະສົບການເຮັດວຽກ

ຈາກກາລາຟົກຜົນການວິເຄາະຂໍ້ມູນກ່ຽວກັບປະສົບການເຮັດວຽກສຶກສານິເທດຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ອາຍຸການເຮັດວຽກແຕ່ 1-3 ປີ ມີຈຳນວນ 22 ຄົນ ເທົ່າກັບ 62.90%, ອາຍຸການເຮັດວຽກແຕ່ 3-5 ປີ ມີຈຳນວນ 5 ຄົນ ເທົ່າກັບ 14.30%, ອາຍຸການເຮັດວຽກແຕ່ 5-7 ປີມີຈຳນວນ 3 ຄົນ ເທົ່າກັບ 8.60%, ອາຍຸການເຮັດວຽກແຕ່ 7-10 ປີ ມີຈຳນວນ 3 ຄົນ ເທົ່າກັບ 8.60%, ແລະ ອາຍຸການ 10 ປີຂຶ້ນໄປ ມີຈຳນວນ 2 ຄົນ ເທົ່າກັບ 5.70%.

### *4.2 ດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດ*

ຕາຕະລາງທີ 1. ຜົນການວິເຄາະຂໍ້ມູນດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ

| ລ/ດ | ເນື້ອໃນດ້ານຄວາມຮູ້ | N | $\bar{X}$ | S.D |
|---|---|---|---|---|
| 1 | ຄວາມຮູ້ກ່ຽວກັບຄູສອນ | 35 | 3.78 | 0.71 |
| 2 | ຄວາມຮູ້ກ່ຽວກັບຜູ້ຮຽນ | 35 | 3.76 | 0.69 |
| 3 | ຄວາມຮູ້ກ່ຽວກັບຫຼັກສູດຊັ້ນປະຖົມສຶກສາ | 35 | 3.73 | 0.77 |
| 4 | ຄວາມຮູ້ກ່ຽວກັບວິທີສິດສອນ | 35 | 3.77 | 0.85 |
| 5 | ຄວາມຮູ້ກ່ຽວກັບການຮຽນຮູ້ຂອງຜູ້ໃຫຍ່ | 35 | 3.85 | 0.79 |
| 6 | ຄວາມຮູ້ກ່ຽວກັບຂັ້ນຕອນຂອງການເຮັດວຽກສຶກສານິເທດ | 35 | 3.78 | 0.71 |
| | **ຄ່າສະເລ່ຍລວມ** | | **3.78** | |
| | **ສະເລ່ຍຄ່າຜັນປ່ຽນມາດຕະຖານ** | | **0.06** | |

ຈາກຕາຕະລາງທີ 1 ຜົນການວິເຄາະຂໍ້ມູນດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ເຊິ່ງມີຄວາມຮູ້ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 3.78$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.06$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມຮູ້ຢູ່ໃນລະດັບຫຼາຍ, ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີຄວາມຮູ້ກ່ຽວກັບການຮຽນຮູ້ຂອງຜູ້ໃຫຍ່ ເຊິ່ງມີຄ່າສະເລ່ຍ $\bar{X} = 3.85$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.79$ ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍ ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມຮູ້ກ່ຽວກັບຫຼັກສູດຊັ້ນປະຖົມສຶກສາ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 3.73$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.77$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມຮູ້ຢູ່ໃນລະດັບຫຼາຍ.

*4.3 ດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດ*

ຜົນການວິເຄາະຂໍ້ມູນດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ

ຕາຕະລາງທີ 2. ດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດ

| ລ/ດ | ເນື້ອໃນທາງດ້ານທັກສະ | N | $\bar{X}$ | $S.D$ |
|---|---|---|---|---|
| 1 | ທັກສະໃນການວາງແຜນ | 35 | 3.70 | 0.79 |
| 2 | ທັກສະໃນການສື່ສານ | 35 | 3.96 | 0.70 |
| 3 | ທັກສະໃນການນຳໃຊ້ຍຸດທະສາດຕ່າງໆ | 35 | 3.73 | 0.77 |
| 4 | ທັກສະໃນການວິເຄາະ, ສັງລວມຂໍ້ມູນ | 35 | 3.83 | 0.65 |
| 5 | ທັກສະໃນການເຮັດວຽກເປັນທີມ | 35 | 4.31 | 0.80 |
| | **ຄ່າສະເລ່ຍລວມ** | | **3.91** | |
| | **ສະເລ່ຍຄ່າຜົນປ່ຽນມາດຕະຖານ** | | **0.07** | |

ຈາກຕາຕະລາງຜົນການວິເຄາະຂໍ້ມູນດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ເຊິ່ງມີທັກສະໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 3.91$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.07$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັກສະຢູ່ໃນລະດັບຫຼາຍ, ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີທັກສະກ່ຽວກັບການເຮັດວຽກເປັນທີມ ເຊິ່ງມີຄ່າສະເລ່ຍ $\bar{X} = 4.31$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.80$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັກສະຢູ່ໃນລະດັບຫຼາຍ. ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍ ແມ່ນທັກສະກ່ຽວກັບການວາງແຜນ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 3.70$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.79$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັກສະຢູ່ໃນລະດັບຫຼາຍ..

*4.4 ດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດ*

ຜົນການວິເຄາະຂໍ້ມູນດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ

ຕາຕະລາງທີ 3. ທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດ

| ລ/ດ | ເນື້ອໃນທາງດ້ານທັດສະນະຄະຕິ | N | $\bar{X}$ | $S.D$ |
|---|---|---|---|---|
| 1 | ຄຸນສົມບັດ | 35 | 4.50 | 0.75 |
| 2 | ທັດສະນະຄະຕິ | 35 | 4.36 | 0.77 |
| 3 | ຄວາມເປັນແບບຢ່າງ | 35 | 4.29 | 0.78 |
| | **ຄ່າສະເລ່ຍລວມ** | | **4.38** | |
| | **ສະເລ່ຍຄ່າຜົນປ່ຽນມາດຕະຖານ** | | **0.02** | |

ຈາກຕາຕະລາງຜົນການວິເຄາະຂໍ້ມູນດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ເຊິ່ງມີທັດສະນະຄະຕິໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 4.38$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.02$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັດສະນະຄະຕິຢູ່ໃນລະດັບຫຼາຍ, ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີທັດສະນະຄະຕິກ່ຽວກັບດ້ານຄຸນສົມບັດ ເຊິ່ງມີຄ່າສະເລ່ຍ $\bar{X} = 4.50$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.75$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັດສະນະຄະຕິຢູ່ໃນລະດັບຫຼາຍ. ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍ ແມ່ນທັດສະນະຄະຕິກ່ຽວກັບຄວາມເປັນແບບຢ່າງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 4.29$ ແລະ ຄ່າຜົນປ່ຽນມາດຕະຖານ $S.D = 0.78$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັດສະນະຄະຕິຢູ່ໃນລະດັບຫຼາຍ.

## 5. ອະພິປາຍຜົນ

ການສຶກສາວິໄຈໃນຄັ້ງນີ້ ຜູ້ວິໄຈ ມີຈຸດປະສົງເພື່ອ 1). ສຳຫຼວດ ແລະ ເກັບກຳຂໍ້ມູນຄວາມຕ້ອງການໃນການພັດທະນາຂີດຄວາມສາມາດທາງດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ, 2). ເພື່ອເປັນການວາງແຜນຊຸກຍູ້ຊ່ວຍເຫຼືອ ແລະ ສະໜັບສະໜູນໃຫ້ແກ່ຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ.

ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມສຶກສາໃນຂອບເຂດ 9 ເມືອງ ແລະ 1 ນະຄອນ ລວມຈຳນວນປະຊາກອນທັງໝົດ ແມ່ນ 35 ຄົນ, ຍິງ 15 ຄົນ, ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນການຄົ້ນຄວ້າວິໄຈໃນຄັ້ງນີ້ ແມ່ນນຳໃຊ້ແບບສອບຖາມທາງອອນລາຍ ເພື່ອປະເມີນຄວາມຕ້ອງການຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມຂອງແຂວງ ຈຳປາສັກ ໃນ 3 ດ້ານຄື: ດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ເຊິ່ງຈະເປັນແບບສອບຖາມໃຫ້ຄະແນນເປັນມາດຕາສ່ວນ 5 ລະດັບ. ແບບສອບຖາມດັ່ງກ່າວປະກອບດ້ວຍ 2 ພາກຄື: ພາກທີ 1: ຂໍ້ມູນທົ່ວໄປກ່ຽວກັບຜູ້ຕອບແບບສອບຖາມ, ພາກທີ 2: ຂໍ້ມູນຄວາມຮູ້ດ້ານທັກສະຕ່າງໆຂອງຜູ້ເຮັດວຽກສຶກສານິເທດໃນ 3 ດ້ານ: ດ້ານຄວາມຮູ້, ດ້ານທັກສະ ແລະ ດ້ານທັດສະນະຄະຕິ. ເຊິ່ງລວມທັງໝົດ ມີ 69 ຂໍ້. ການວິເຄາະຂໍ້ມູນແມ່ນນຳໃຊ້ ໂປແກຣມສຳເລັດຮູບ ໂປແກຣມສຳເລັດຮູບ Excel 2010 ໂດຍການຫາຄ່າສະເລ່ຍ ( $\overline{X}$ ) ແລະ ຄ່າຜັນປ່ຽນມາດຕະຖານ (SD) ແລະ ຜົນການປະເມີນຈາກຄ່າສ່ວນຮ້ອຍຂອງຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມຈາກ Google Forms. ດັ່ງນັ້ນ, ຜູ້ຄົ້ນຄວ້າວິໄຈ ຈິ່ງອະພິປາຍຜົນ ການຄົ້ນຄວ້າວິໄຈດັ່ງລຸ່ມນີ້:

ຈາກຜົນການວິເຄາະຂໍ້ມູນຄວາມຮູ້ດ້ານທັກສະຕ່າງໆຂອງຜູ້ເຮັດວຽກສຶກສານິເທດໃນ 3 ດ້ານ: ດ້ານຄວາມຮູ້, ດ້ານທັກສະ ແລະ ດ້ານທັດສະນະຄະຕິ. ຜົນການວິເຄາະຂໍ້ມູນດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ເຊິ່ງມີຄວາມຮູ້ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X}$ = 3.78 ແລະ ຄ່າຜັນປ່ຽນມາດຕະຖານ $S.D$ = 0.06 ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມຮູ້ຢູ່ໃນລະດັບຫຼາຍ, ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີຄວາມຮູ້ກ່ຽວກັບການຮຽນຮູ້ຂອງຜູ້ໃຫຍ່ ເຊິ່ງມີຄ່າສະເລ່ຍ $\bar{X}$ = 3.85 ແລະ ຄ່າຜັນປ່ຽນມາດຕະຖານ $S.D$ = 0.79 ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍ ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມຮູ້ກ່ຽວກັບຫຼັກສູດຊັ້ນປະຖົມສຶກສາ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X}$ = 3.73 ແລະ ຄ່າຜັນປ່ຽນມາດຕະຖານ $S.D$ = 0.77 ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີຄວາມຮູ້ຢູ່ໃນລະດັບຫຼາຍ. ເຊິ່ງໂດຍລວມແລ້ວຜ່ານການສຶກສາຄົ້ນຄວ້າທາງດ້ານຄວາມຮູ້ຂອງຜູ້ເຮັດວຽກສຶກສານິເທດ ໃນ 6 ຂໍ້, ຈຳນວນ 31 ລາຍການ ເຫັນວ່າ: ດ້ານຄວາມຮູ້ກ່ຽວກັບຫຼັກສູດຊັ້ນປະຖົມສຶກສາ ແມ່ນມີຄະແນນສະເລ່ຍຢູ່ໃນລະດັບໜ້ອຍກວ່າດ້ານອື່ນໆ ສະແດງວ່າ: ຜູ້ເຮັດວຽກສຶກສານິເທດ ຈຳນວນຫຼາຍແມ່ນຍັງບໍ່ທັນເຂົ້າໃຈເລິກເຊິ່ງກ່ຽວກັບຫຼັກສູດຊັ້ນປະຖົມ ເຊັ່ນ: ເນື້ອໃນຂອງແຕ່ລະລາຍວິຊາຮຽນ, ຄວາມຮູ້ກ່ຽວກັບເຕັກນິກການສອນ, ການວັດປະເມີນຜົນການຮຽນຂອງຜູ້ຮຽນ, ການບັນທຶກຄະແນນຜົນການຮຽນໃສ່ປຶ້ມບັນທຶກຄະແນນແຕ່ລະວິຊາຮຽນ, ການແຕ່ງບົດສອນສຳລັບການສອນຫ້ອງຄວບ ແລະ ຄວາມຮູ້ກ່ຽວກັບການສອນພາສາລາວໃຫ້ເດັກນ້ອຍທີ່ບໍ່ເວົ້າພາສາລາວ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າ ຂອງ ສຸພາວະດີ ປັກຄອງ ແລະ ສຸວັດຈຸລະສຸວັນ (2018) ໄດ້ສຶກສາກ່ຽວກັບ ການພັດທະນາຄູໂດຍໃຊ້ແນວຄິດຊຸມຊົນການຮຽນຮູ້ທາງວິຊາຊີບເພື່ອການອ່ານອອກຂຽນໄດ້ຂອງນັກຮຽນປະຖົມສຶກ. ຜົນການວິໄຈພົບວ່າ: 1) ຄູມີຄວາມຮູ້ ແລະ ຄວາມເຂົ້າໃຈໃນການຄຸ້ມຄອງການຮຽນການສອນ ຫຼາຍກວ່າກ່ອນການເຝິກອົບຮົມ, ມີຄວາມໝາຍທາງສະຖິຕິຢູ່ລະດັບ .05 2) ຄູມີຄວາມສາມາດໃນການຈັດຕັ້ງການຮຽນ . ໂດຍລວມແມ່ນຢູ່ໃນລະດັບສູງສຸດ 3) ຄວາມພໍໃຈຂອງການນຳໃຊ້ລະບົບການພັດທະນາຄູໂດຍນຳໃຊ້ແນວຄວາມຄິດຂອງຊຸມຊົນການຮຽນຮູ້ວິຊາຊີບ. ສຳລັບຄວາມຊັດເຈນ ຄວາມສາມາດໃນການຂຽນຂອງນັກຮຽນຊັ້ນປະຖົມ ພົບວ່າມີລະດັບຄວາມພໍໃຈສູງສຸດ ແລະ 4) ນັກຮຽນມີຄວາມສາມາດໃນດ້ານການຮູ້ໜັງສືຫຼັງຮຽນແມ່ນສູງກວ່າກ່ອນຮຽນ. ມີຄວາມສຳຄັນທາງສະຖິຕິໃນລະດັບ .05.

ຜົນການວິເຄາະຂໍ້ມູນດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ດ້ານທັກສະຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ເຊິ່ງມີທັກສະໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X}$ = 3.91 ແລະ ຄ່າຜັນປ່ຽນມາດຕະຖານ $S.D$ = 0.07 ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັກສະຢູ່ໃນລະດັບຫຼາຍ, ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີທັກສະກ່ຽວກັບການເຮັດວຽກເປັນທີມ ເຊິ່ງມີຄ່າສະເລ່ຍ $\bar{X}$ = 4.31 ແລະ ຄ່າຜັນປ່ຽນມາດຕະຖານ $S.D$ = 0.80 ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັກສະຢູ່ໃນລະດັບຫຼາຍ. ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍ ແມ່ນທັກສະກ່ຽວກັບການວາງແຜນ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X}$ = 3.70 ແລະ ຄ່າຜັນປ່ຽນມາດຕະຖານ $S.D$ = 0.79 ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັກສະຢູ່ໃນລະດັບຫຼາຍ. ສິ່ງດັ່ງກ່າວສະແດງໃຫ້ເຫັນວ່າ: ຄ່າສະເລ່ຍທັກສະທາງດ້ານການວາງແຜນແມ່ນຍັງມີຄ່າສະເລ່ຍໜ້ອຍ. ສະນັ້ນ, ຜູ້ເຮັດວຽກສຶກສານິເທດ ຍັງຕ້ອງການຮຽນຮູ້ ແລະ ຝຶກທັກສະ ທາງດ້ານການວາງແຜນຕ່າງໆໃນການດຳເນີນວຽກງານ ເຊັ່ນວ່າ: ການສ້າງແຜນໃນການສະໜັບສະໜູນຄູປະຈຳການ, ການວາງແຜນໃນການກຳນົດຄວາມຕ້ອງການຂອງຄູ ແລະ ແຜນການສະໜັບສະໜູນໃຫ້ການຊ່ວຍເຫຼືອໃນວຽກງານພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນແຕ່ລະກຸ່ມໂຮງຮຽນຕື່ມອີກ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງກະຊວງສຶກສາທິການ ແລະ ກິລາ ,ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາໄດ້ສຶກສາກ່ຽວກັບ ການປະເມີນຜົນສຳເລັດດ້ານການຮຽນ ຂອງນັກຮຽນຊັ້ນປະຖົມ ປີທີ 3 ໃນສ ປ ປ ລາວ .ພົບວ່າ: ປັດໄຈທີ່ມີຄວາມສຳພັນກັບຜົນສຳເລັດດ້ານການຮຽນຂອງນັກຮຽນມີຫຼາຍປັດໃຈປະກອບມີ: 1) ປັດໄຈນຳເຂົ້າດ້ານເສດຖະກິດຄອບຄົວ ແລະ ການສະໜັບສະໜຸນອື່ນໆ ຈາກພາຍນອກໂຮງຮຽນ. 2) ສະພາບເງື່ອນໄຂຂອງຫ້ອງຮຽນ ແລະ

ຂະບວນການໃນການຈັດການຮຽນການສອນ. 3) ປັດໄຈນຳເຂົ້າຕ່າງໆ ຂອງໂຮງຮຽນ.

ຜົນການວິເຄາະຂໍ້ມູນດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກ ພົບວ່າ: ດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ ເຊິ່ງມີທັດສະນະຄະຕິໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 4.38$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.02$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັດສະນະຄະຕິຢູ່ໃນລະດັບຫຼາຍ, ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນມີທັດສະນະຄະຕິກ່ຽວກັບດ້ານຄຸນສົມບັດ ເຊິ່ງມີຄ່າສະເລ່ຍ $\bar{X} = 4.50$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.75$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັດສະນະຄະຕິຢູ່ໃນລະດັບຫຼາຍ. ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍ ແມ່ນທັດສະນະຄະຕິກ່ຽວກັບຄວາມເປັນແບບຢ່າງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ $\bar{X} = 4.29$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.78$ ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນຜູ້ເຮັດວຽກນິເທດຊັ້ນປະຖົມມີທັດສະນະຄະຕິຢູ່ໃນລະດັບຫຼາຍ. ໂດຍລວມແລ້ວ ຜົນຂອງການຄົ້ນຄວ້າຄວາມຕ້ອງການທາງດ້ານທັດສະນະຄະຕິໃນການເຮັດວຽກຂອງຜູ້ເຮັດວຽກສຶກສານິເທດ ແມ່ນພຽງພໍແລ້ວ, ເຫັນໄດ້ວ່າ: ທັດສະນະຄະຕິ ທັງ 3 ດ້ານ ແລະ 12 ຕົວຊີ້ວັດຂອງແບບສອບຖາມ ແມ່ນມີຄະແນນສະເລ່ຍແມ່ນຢູ່ໃນລະດັບຫຼາຍ. ພວກເຂົາສາມາດປະສານງານ, ມີຄວາມເຂົ້າໃຈ, ມີມິດຕະພາບ ແລະ ມີຄວາມສຳພັນທີ່ດີຕໍ່ກັບຄູສອນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຂອງການດຳເນີນວຽກງານສຶກສານິເທດ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ປິລະເມກ ກົ່ນຫອມ (2021) ໄດ້ສຶກສາກ່ຽວກັບ ການພັດທະນາຊຸດກິດຈະກຳການຮຽນການສອນບູລະນາການເພື່ອສົ່ງເສີມທັກສະການອ່ານຂຽນໄດ້ຂອງນັກຮຽນລະດັບປະຖົມສຶກສາປີທີ 1-4. ຜົນການວິໄຈພົບວ່າ:1)ຜົນການອ່ານອອກຂຽນໄດ້ຂອງນັກຮຽນພາບລວມຍັງຕ່ຳກວ່າເກນມີສາເຫດມາຈາກ ໂຮງຮຽນມີທີ່ຕັ້ງຢູ່ເຂດພື້ນທີ່ຫ່າງໄກ, ຜູ້ບໍລິຫານ ແລະຄູ ຕ້ອງການພັດທະນາຜົນສຳເລັດທາງການຮຽນຂອງນັກຮຽນ 2) ການຈັດກິດຈະກຳແບບບູລະນາການເໝາະໂຮງຮຽນ, 3)ຜົນການທົດລອງສູງກວ່າເກນ ທັງໝົດ 4 ຊຸດ ມີປະສິດຕິພາບສູງກວ່າມາດຖານ 80/80 4) ການປະເມີນພົບວ່າຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນຊັ້ນປະຖົມປີທີ 1-4 ຂອງການສຶກສາແມ່ນປະເມີນຈາກທັກສະການອ່ານ ແລະທັກສະການຂຽນ ຫຼັງຈາກການເຂົ້າຮ່ວມໃນການຄົ້ນຄວ້າແມ່ນສູງຂຶ້ນ ກ່ອນທີ່ຈະເຂົ້າຮ່ວມກັບຄວາມສຳຄັນທາງສະຖິຕິໃນລະດັບ 0.05, ນັກຮຽນໃນທຸກລະດັບ ມີພຶດຕິກຳທີ່ສະແດງໃຫ້ເຫັນຄວາມສຸກໃນ ສຶກສາຫຼັງຈາກເຂົ້າຮ່ວມກິດຈະກຳໃນລະດັບສູງ ($\bar{x} = 3.93$).

## 6. ສະຫຼຸບຜົນ

ການສຶກສາຄັ້ງນີ້ຊີ້ໃຫ້ເຫັນວ່າຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາມີຄວາມຮູ້ຢູ່ໃນລະດັບຫຼາຍໃນດ້ານການຮຽນຮູ້ຂອງຜູ້ໃຫຍ່ ແລະ ຮອງລົງມາແມ່ນມີຄວາມຮູ້ກ່ຽວກັບຫຼັກສູດຊັ້ນປະຖົມສຶກສາ. ຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາຍັງມີທັກສະຢູ່ໃນລະດັບຫຼາຍໃນດ້ານການເຮັດວຽກເປັນທີມ. ຮອງລົງມາແມ່ນທັກສະກ່ຽວກັບການວາງແຜນ. ສຳລັບດ້ານທັດສະນະຄະຕິຂອງຜູ້ເຮັດວຽກສຶກສານິເທດຊັ້ນປະຖົມໃນແຂວງຈຳປາສັກກໍມີທັດສະນະຄະຕິໂດຍລວມຢູ່ໃນລະດັບຫຼາຍ ໂດຍສະເພາະທັດສະນະຄະຕິກ່ຽວກັບດ້ານຄຸນສົມບັດ ແລະ ຮອງລົງມາແມ່ນທັດສະນະຄະຕິກ່ຽວກັບຄວາມເປັນແບບຢ່າງ.

## 7. ຂໍ້ສະເໜີແນະ

ເຖິງວ່າຜູ້ເຮັດວຽກສຶກສານິເທດຈຳນວນຫຼາຍເຄີຍມີປະສົບການເປັນຄູຝຶກປະຈຳແຂວງກໍ່ຕາມ, ແຕ່ທາງດ້ານຄວາມຮູ້ຈະຕ້ອງໄດ້ມີການພັດທະນາເພີ່ມເອງຂຶ້ນ, ໂດຍສະເພາະແມ່ນຄວາມຮູ້ກ່ຽວກັບຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່.

ຜູ້ເຮັດວຽກສຶກສານິເທດຕ້ອງໄດ້ເຂົ້າໃຈລາຍລະອຽດເນື້ອໃນຂອງລາຍວິຊາຮຽນຕ່າງໆໃນຊັ້ນປະຖົມ ລວມໄປເຖິງຄວາມຮູ້ກ່ຽວກັບວິທີການຈັດການຮຽນການສອນທີ່ເນັ້ນໃຫ້ຜູ້ຮຽນປະຕິບັດຕົວຈິງ. ທັງນີ້ກໍເພື່ອໃຫ້ຜູ້ເຮັດວຽກສຶກສານິເທດໄດ້ເຂົ້າໃຈ ແລະ ແນະນຳຄູປະຈຳການໃຫ້ຖືກຕ້ອງຕາມຫຼັກສູດກຳນົດໄວ້.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

1. ປະຊາກອນທີ່ເຂົ້າຮ່ວມໃນການສຶກສາຄັ້ງນີ້ຍັງບໍ່ທັນຄອບຄຸມໄປທົ່ວແຂວງ.

2. ການສຶກສາຄັ້ງນີ້ຍັງບໍ່ທັນໄດ້ສຶກສາ ແລະ ປຽບທຽບຂະບວນການຈັດການຮຽນຮູ້ຂອງຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ໃນວິຊາພາສາລາວ ແລະ ວິຊາອື່ນໆທີ່ກຳນົດໄວ້ໃນຫຼັກສູດປະຖົມສຶກສາ.

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2008). *ການສອນພາສາລາວຍຊັ້ນປະຖົມສຶກສາ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021 - 2025).* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2022). ຂໍ້ຕົກລົງວ່າດ້ວຍການພັດທະນາວິຊາຊີບຄູແບບຕໍ່ເນື່ອງ. *ກະຊວງສຶກສາທິການ ແລະ ກິລາ* (pp. 2-10). ນະຄອນຫຼວງວຽງຈັນ: ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2023). *ຄູ່ມືການສ້າງຂີດຄວາມສາມາດໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ໂມດູນ 1.* ນະຄອນຫຼວງວຽງຈັນ: ກົມສ້າງຄູ, ພະແນກບຳລຸງຄູ.

ກະຊວງສຶກສາທິການ ແລະ ກິລາ. (2023). *ຄູ່ມືຝຶກອົບຮົມຜູ້ເຮັດວຽກສຶກສານິເທດຊັ້ນປະຖົມສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ສົມນຶກ ພັດທິຍະທານີ. (2546:218-220). *ການວັດຜົນການສຶກສາ.* ກາລະສິນ: ປະສານການພິມ ພິມຄັ້ງທີ 7.

ສົມບັດ ທ້າຍເຮືອຄຳ. (2553 : 107 ). *ລະບຽບວິທີວິໄຈສຳລັບມະນຸດສາດ ແລະ ສັງຄົມສາດ.* ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ ພິມຄັ້ງທີ 4.

ບຸນຊົມ ສີສະອາດ. (2554:98-102). *ການວິໄຈສຳລັບຄູ.* ກຸງເທບ: ສຸວີຣິຍາສັນ.

ວິທະຍາໄລຄູປາກເຊ. (2020). *ຍຸດທະສາດການພັດທະນາການສຶກສາ ແຕ່ປີ 2021-2025* . ນະຄອນປາກເຊ: ວິທະຍາໄລຄູປາກເຊ.